# ຜູ້ກວດການແຜ່ນດິນ ແມ່ນໃຜ ?

**ຜູ້ກວດການແຜ່ນດິນ** ແມ່ນອົງກອນອິສະຣະຕາມລັດຖະທຳມະນູນ ມີອຳນາດໜ້າທີ່ກວດກາເລື່ອງຮ້ອງຮຽນກໍຣະນີການບໍ່ປະຕິບັດຕາມກົດໝາຍ ຫລືປະຕິບັດນອກເໜືອອຳນາດໜ້າທີທີ່ກໍ່ໃຫ້ເກີດຄວາມເສຍ ຫາຍໂດຍບໍ່ເປັນທຳຂອງຂ້າຣາຊະການແລະເຈົ້າໜ້າທີ່ຂອງລັດທຸກລະດັບ ການລະເລີຍຫລືປະຕິບັດໜ້າທີ ໂດຍບໍ່ຊອບດ້ວຍກົດໝາຍຂອງອົງກອນຕາມລັດຖະທຳມະນູນ ແລະອົງກອນໃນກະບວນການຍຸຕິທຳ ນອກຈາກນີ້ຍັງມີໜ້າທີ່ດຳເນີນການກ່ຽວກັບຈະຣິຍະທຳ ຂອງຜູ້ດຳລົງຕຳແໜ່ງທາງການເມືອງແລະເຈົ້າໜ້າທີ່ຂອງລັດ ການຕິດຕາມປະເມີນຜົນແລະສະເໜີແນະໃນການປະຕິບັດຕາມລັດຖະທຳມະນູນ ໂດຍແມ່ນຍຶດ ຫລັກຄວາມເປັນທຳຫລກັ ທຳມາພິບານແລະຫລັກຄຸນະທຳຈະຣິຍະທຳເພື່ອຄຸ້ມຄອງສິດແລະຊ່ວຍເຫລືອ ປະຊາຊົນທີ່ໄດ້ຮັບຄວາມເດືອດຮ້ອນແລະປະໂຫຍດສາທາຣະນະ




## ໂທ 1676
## ຟຣີທົ່ວປະເທດ

**ສຳນັກງານຜູ້ກວດການແຜ່ນດິນ**
ສູນຣາຊະການສະເຫລີມພະກຽດ 80 ພັນສາ 5 ທັນວາ 2550
ອາຄານລັດປະສາສນະພັກດີ ຊັ້ນ 5
ເລກທີ 120 ໝູ່ທີ 3 ຖະໜົນແຈ້ງວັດທະນະ
ແຂວງທົ່ງສອງຫ້ອງ ເຂດຫລັກສີ່ ກຸງເທບ 10210
ໂທຣະສັບ 0 2141 9100 ໂທຣະສານ 0 2143 8341
www.ombudsman.go.th

ภาษาลาว

# ຫາກບໍ່ໄດ້ຮັບຄວາມເປັນທຳ ຈາກຂ້າຣາຊການ ເຫລືອ ຈ້ຳໜ້າທີ່ຂອງລັດ




**ສຳນັກງານກວດການແຜ່ນດິນ**

ຄວາມຫລ້າຊ້າ ແມ່ນຄວາມບໍ່ເປັນທຳ

ຂັ້ນຕອນການຮ້ອງຮຽນ

## ສຳນັກງານຜູ້ກວດການແຜ່ນດິນ

# 1

## ເລີ້ມຕົ້ນທີ່ນີ້

ຫາກ ບໍ່ໄດ້ຮັບຄວາມເປັນທຳຈາກ ຂ້າຣາຊະການ ຫລື ພະນັກງານ ຂອງລັດ

# 2

## ຊ່ອງທາງການຮ້ອງຮຽນ

### ການຮ້ອງຮຽນທາງໂທຣະສັບ

2.1 ໝາຍເລກໂທຣະສັບ 02 141 9100 ຫລືສາຍດ່ວນ 1676 (ຟຣີທົ່ວປະເທດ)

2.2 ບອກຊື່ ທີ່ຢູ່ ແລະໝາຍເລກໂທຣະສັບ (ຖ້າມີ) ຂອງຜູ້ຮ້ອງຮຽນ

2.3 ບອກເລກປະຈຳຕົວປະຊາຊົນ ຫລືເລກທີ ໜັງສືເດີນທາງຂອງຜູ້ຮ້ອງຮຽນ






### ຮ້ອງຮຽນທາງໄປສະນີ

ຕ້ອງລົງຊື່ຜູ້ຮ້ອງຮຽນ ທີ່ຢູ່ ໂທຣະສັບ (ຫລືໂທຣະສັບໃກ້ເຮືອນທີ່ຕິດຕໍ່ໄດ້) ບອກຜູ້ຖືກຮ້ອງຮຽນແລະເຫດ ທີ່ຕ້ອງຮ້ອງຮຽນ (ຖ້າຕ້ອງການປິດລັບຊື່ຜູ້ຮ້ອງຮຽນ ຂໍໃຫ້ແຈ້ງພ້ອມ) ສຳນັກງານຯຈະປິດລັບຢ່າງເຄັ່ງຄັດ ແມ່ນໃຫ້ສົ່ງໄປຫາ ສຳນັກງານຜູ້ກວດການແຜ່ນດິນ ຕູ້ ປນ.333 ປນຝ. ສູນຣາຊະການສະເຫລີມພະ ກຽດຯ ກຸງເທບຯ 10215

### ຮ້ອງຮຽນຜ່ານອິນເຕີເນັດ ທີ່ www.ombudsman.go.th

### ຮ້ອງຮຽນຜ່ານເຄືອຂ່າຍຂອງຜູ້ກວດການແຜ່ນດິນ

ສົ່ງຜ່ານສຳນັກງານຄຸ້ມຄອງສິດແລະຊ່ວຍເຫລືອທາງກົດໝາຍໃຫ້ປະຊາຊົນ (ສຄຊ.) ສຳນັກງານໄອຍະ ການຈັງຫວັດທົ່ວປະເທດ ໂທ 1157 (ຟຣີທົ່ວປະເທດ) ສະພາທະນາຍຄວາມ ແລະ ສຳນັກງານສາຂາຂອງ ສະພາທະນາຍຄວາມທົ່ວປະເທດ

### ຮ້ອງຮຽນຜ່ານຕາງໜ້າຣາສະດອນ (ສ.ສ.) ຫລືສະມາຊິກວຸທິສະພາ (ສ.ວ.)

ຜູ້ກວດການແຜ່ນດິນໄດ້ຈັດສົ່ງເຈົ້າໜ້າທີ່ໄປຮັບເລື່ອງຮ້ອງຮຽນທີ່ອາຄານລັດຖະສະພາ ໃນໄລຍະໄຂກອງ ປະຊຸມສະພານຳ

### ຮ້ອງຮຽນດ້ວຍຕົວເອງ

ທີ່ ສຳນັກງານຜູ້ກວດການແຜ່ນດິນ ສູນຣາຊະການສະເຫລີມພະກຽດຯ ອາຄານລັດປະສາສນະພັກດີ ຊັ້ນ 5 ຖະໜົນແຈ້ງວັດທະນະ ແຂວງທົ່ງສອງຫ້ອງ ເຂດຫລັກສີ່ ກຸງເທບຯ